**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ..62../ສພຂ.ຊຍ
ໄຊຍະບູລີ, ວັນທີ..12..ສິງຫາ 2022

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ
## ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ
## ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2016 ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີ່ໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022.

ຜ່ານການຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2022**

ກອງປະຊຸມສະແດງຄວາມຍ້ອງຍໍຊົມເຊີຍ ແລະ ເຫັນດີເປັນເອກະພາບ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ທີ່ຕີລາຄາວ່າ ແຂວງຂອງພວກເຮົາຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ເຖິງວ່າຈະພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2022 ແຕ່ສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນໃນຫຼາຍຄາດໝາຍ ເປັນຕົ້ນ:

## 1. ຄາດໝາຍດ້ານເສດຖະກິດມະຫາພາກ:

1) ການເຕີບໂຕເສດຖະກິດມະຫາພາກ: ໄດ້ເອົາໃຈໃສ່ ສູ້ຊົນຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II

2) ດ້ານງົບປະມານ:

- ລາຍຮັບປະຕິບັດໄດ້ 531,49 ຕື້ກີບ ເທົ່າກັບ 47% ຂອງແຜນການປີ, ໃນນີ້:
  + ລາຍຮັບພູດສູນກາງ ປະຕິບັດໄດ້ 437,24 ຕື້ກີບ ເທົ່າກັບ 49% ຂອງແຜນການປີ;
  + ລາຍຮັບພາຍໃນ ປະຕິບັດໄດ້ 94,25 ຕື້ກີບ ເທົ່າກັບ 41% ຂອງແຜນການປີ;
- ການຄຸ້ມຄອງລາຍຈ່າຍ: ປະຕິບັດໄດ້ 245,47 ຕື້ກີບ ເທົ່າກັບ 52% ຂອງແຜນການປີ;
- ການດຸ່ນດ່ຽງງົບປະມານ: ປະຕິບັດໄດ້ 190,43 ຕື້ກີບ ເທົ່າກັບ 79% ຂອງແຜນການປີ.

3) ດ້ານແຫຼ່ງທຶນເພື່ອການພັດທະນາ: ການລົງທຶນປະຕິບັດໄດ້ທັງໝົດ 878,2 ຕື້ກີບ ເທົ່າກັບ 30% ຂອງແຜນການປີ, ໃນນີ້:

- ການລົງທຶນຂອງລັດ ກວມເອົາ 10%;
- ທຶນຊ່ວຍເຫລືອທາງການເພື່ອການພັດທະນາ ກວມເອົາ 9%;
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 42%;
- ສິນເຊື່ອຂອງທະນາຄານ ກວມເອົາ 38% ຂອງທຶນທັງໝົດ;

## 2. ຄາດໝາຍດ້ານເສດຖະກິດຂອງບັນດາຂະແໜງການ:

1) ກະສິກຳ ແລະ ປ່າໄມ້:

- ຜະລິດເຂົ້າສາມາດປະຕິບັດໄດ້ 9.086 ໂຕນ ເທົ່າກັບ 4% ຂອງແຜນການປີ;
- ຜະລິດພືດສະບຽງອາຫານ ສາມາດປະຕິບັດໄດ້ 50.117 ໂຕນ ເທົ່າກັບ 28% ຂອງແຜນການປີ;
- ຜະລິດພືດເປັນສິນຄ້າ ສາມາດປະຕິບັດໄດ້ 92.888 ໂຕນ ເທົ່າກັບ 5% ຂອງແຜນການປີ;
- ຜະລິດຊີ້ນ, ປາ ແລະ ໄຂ່ ສາມາດປະຕິບັດໄດ້ 10.994,45 ໂຕນ, ເທົ່າກັບ 41% ຂອງແຜນການປີ;
- ຜະລິດສັດເປັນສິນຄ້າພາຍໃນ ແລະ ສົ່ງອອກໄປຕ່າງແຂວງ ສາມາດປະຕິບັດໄດ້ 45.762 ໂຕ ເທົ່າກັບ 31% ຂອງແຜນການປີ.

2) ອຸດສາຫະກຳ ແລະ ການຄ້າ:

- ມູນຄ່າການສົ່ງອອກໄປຕ່າງປະເທດ ປະຕິບັດໄດ້ 84,55 ລ້ານໂດລາສະຫະລັດ ແລະ ນຳເຂົ້າສິນຄ້າໄດ້ 67,16 ລ້ານໂດລາສະຫະລັດ, ເກີນດຸນການຄ້າ 17,39 ລ້ານໂດລາສະຫະລັດ;
- ການຜະລິດດ້ານອຸດສາຫະກຳ-ຫັດຖະກຳ ມີມູນຄ່າ 115,68 ຕື້ກີບ, ເທົ່າກັບ 49% ຂອງແຜນການປີ;
- ມູນຄ່າຈຳໜ່າຍຜະລິດຕະພັນດ້ານອຸດສາຫະກຳ-ຫັດຖະກຳປະຕິບັດໄດ້ 134,41 ຕື້ກີບ ເທົ່າກັບ 49% ຂອງແຜນການ;
- ມູນຄ່າຈໍລະຈອນສິນຄ້າ ໄດ້ 97,46 ຕື້ກີບ ເທົ່າກັບ 69% ຂອງແຜນການປີ.

3) ພະລັງງານ ແລະ ບໍ່ແຮ່:

- ການກໍ່ສ້າງໂຄງການເຂື່ອນໄຟຟ້ານ້ຳຮຸ່ງ 1 ມາຮອດປະຈຸບັນມີຄວາມຄືບໜ້າ 88%;
- ທົ່ວແຂວງໄດ້ຊົມໃຊ້ໄຟຟ້າແລ້ວ 430 ບ້ານ, ມີຈຳນວນ 79.278 ຄອບຄົວ ເທົ່າກັບ 98% ຂອງຈຳນວນຄອບຄົວທັງໝົດທົ່ວແຂວງ;

- ຜະລິດພະລັງງານໄຟຟ້າ ໄດ້ 96,59 ລ້ານກິໂລວັດໂມງ ເທົ່າກັບ 52% ຂອງແຜນການປີ ແລະ ການຈຳໜ່າຍພະລັງງານໄຟຟ້າ ໄດ້ 89,11 ລ້ານກິໂລວັດໂມງ ເທົ່າກັບ 54% ຂອງແຜນປີ;
- ສາມາດຂຸດຄົ້ນແຮ່ທາດ (ຫີນປູນ) ໄດ້ທັງໝົດ 119.809 ແມັດກ້ອນ ເທົ່າກັບ 29% ຂອງແຜນການປີ.

4) ໂຍທາທິການ ແລະ ຂົນສົ່ງ:

- ໄດ້ປູຢາງອັດສະຟານ ເສັ້ນທາງພາຍໃນເທດສະບານແຂວງ ຈຳນວນ 10 ສັນຍາ ມາຮອດປະຈຸບັນປະຕິບັດໄດ້ 33% ຂອງລວງຍາວທັງໝົດ;
- ສ້ອມແປງທາງຫຼວງແຫ່ງຊາດ ປີ 2021 ຈຳນວນ 7 ສັນຍາ ມູນຄ່າ 27,04 ຕື້ກີບ ສາມາດປະຕິບັດໄດ້ 100%;
- ສຳເລັດການສຳຫຼວດ ແລະ ລົງມືກໍ່ສ້າງຕາຝັ່ງເຈື່ອນ ຈຸດນາຂ່າ (ໜອງຄອບ ເມືອງບໍ່ແຕນ);
- ສຳເລັດການປະມູນຈັດຊື້-ຈັດຈ້າງ ແລະ ກຽມຈັດຕັ້ງປະຕິບັດການຟື້ນຟູ-ສ້ອມແປງປ້ອງກັນຕາຝັ່ງເຈື່ອນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມເທດສະບານເມືອງ ໄຊຍະບູລີ;
- ໂຄງການຂະຫຍາຍນ້ຳປະປາ ແລະ ສຸຂາພິບານເມືອງໄຊຍະບູລີ ປະຕິບັດໄດ້ 98% ສາມາດຮັບປະກັນຜະລິດນ້ຳປະປາ ແລະ ບໍລິການຮັບໃຊ້ປະຊາຊົນໃຫ້ພຽງພໍ.

5) ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

- ຈັດສັນທີ່ດິນຂັ້ນເມືອງ 1 ເມືອງຄື: ເມືອງ ພຽງ, ໄດ້ຈັດສັນທີ່ດິນຂັ້ນບ້ານ 18 ບ້ານ ເທົ່າກັບ 45% ຂອງແຜນການປີ;
- ຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝໄດ້ທັງໝົດ 5,012 ຕອນ ເທົ່າກັບ 62,65% ຂອງແຜນການປີ;
- ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໄດ້ 245 ຫົວໜ່ວຍ ເທົ່າກັບ 58% ຂອງແຜນການປີ;
- ລົງຕິດຕາມກວດກາ ຄຸນນະພາບນ້ຳ ໃນຂອບເຂດທົ່ວແຂວງ ໄດ້ທັງໝົດ 44 ຈຸດ ເທົ່າກັບ 157% ຂອງແຜນການປີ.

6) ເຕັກໂນໂລຊີ ແລະ ການສື່ສານ:

- ກຳລັງຂະຫຍາຍເວັບໄຊຂອງພາກລັດ (G-Web Platform) ທົ່ວແຂວງ ໄດ້ຈຳນວນ 06 ເວັບໄຊ;
- ຂະຫຍາຍສາຍກາບໃຍແສງ (Optic Fiber) 123,30 Km ເທົ່າກັບ 32% ຂອງແຜນການປີ;
- ຕັ້ງເສົາສະຖານີຮັບ-ສົ່ງສັນຍານໂທລະສັບໄດ້ 06 ຕົ້ນ ເທົ່າກັບ 23% ຂອງແຜນການປີ;
- ຕິດຕັ້ງສະຖານີຮັບ-ສົ່ງສັນຍານໂທລະສັບໄດ້ 14 ສະຖານີ ເທົ່າກັບ 39% ຂອງແຜນການປີ.

**3. ຄາດໝາຍດ້ານວັດທະນະທຳ-ສັງຄົມ**

1) ສຶກສາທິການ ແລະ ກິລາ:

- ການຈັດຕັ້ງປະຕິບັດ 19 ຕົວຊີ້ບອກສາມາດບັນລຸໄດ້ 10 ຕົວຊີ້ບອກ ແລະ ຍັງບໍ່ສາມາດບັນລຸ 9 ຕົວຊີ້ບອກ;
- ສຳເລັດການສອບເສັງພາກຮຽນທີ II ແລະ ການສອບເສັງນັກຮຽນເກັ່ງຂັ້ນແຂວງ.

2) ສາທາລະນະສຸກ:

- ການຈັດຕັ້ງປະຕິບັດ 11 ຕົວຊີ້ວັດ ສາມາດບັນລຸໄດ້ 9 ຕົວຊີ້ວັດ ແລະ ຍັງບໍ່ສາມາດບັນລຸ 2 ຕົວຊີ້ວັດ;
- ສຳເລັດການສັກຢາວັກຊິນປ້ອງກັນພະຍາດໂຄວິດ-19 ເຂັມທີ 1 ກວມເອົາ 72%, ເຂັມທີ 2 ກວມເອົາ 59% ແລະ ເຂັມກະຕຸ້ນກວມເອົາ 19% ທຽບໃສ່ປະຊາກອນທັງໝົດທົ່ວແຂວງ.

3) ແຮງງານ ແລະ ສະຫວັດດີການ-ສັງຄົມ:

- ການຈັດຕັ້ງປະຕິບັດ 9 ຄາດໝາຍນັ້ນ, ສາມາດບັນລຸໄດ້ຫຼາຍກວ່າ 50% ມີ 3 ຄາດໝາຍ ແລະ 6 ຄາດໝາຍແມ່ນປະຕິບັດໄດ້ຕ່ຳກວ່າ 50%;
- ຄາດໝາຍທີ່ປະຕິບັດໄດ້ຕ່ຳກວ່າໝູ່ແມ່ນ ການປະຕິບັດນະໂຍບາຍຕໍ່ຜູ້ເສຍອົງຄະ, ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໄດ້ 3,8%.

4) ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ການຈັດຕັ້ງປະຕິບັດ 7 ຄາດໝາຍນັ້ນ, ສາມາດຈັດຕັ້ງປະຕິບັດໄດ້ຫຼາຍກວ່າ 50% ຂອງແຜນການປີ ມີ 2 ຄາດໝາຍ ແລະ 5 ຄາດໝາຍທີ່ປະຕິບັດໄດ້ຕ່ຳກວ່າ 50% ຂອງແຜນການ;
- ຄາດໝາຍທີ່ປະຕິບັດໄດ້ຕ່ຳກວ່າໝູ່ແມ່ນ ການດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໄດ້ 3,9% ຂອງແຜນການປີ.

5) ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:

- ສັງລວມການເກັບກຳ 348/ລບ ສາມາດສະຫຼຸບ ຄອບຄົວບໍ່ທັນພົ້ນທຸກ ມີ 3.830 ຄອບຄົວ, ເທົ່າກັບ 4,7% ຂອງຄອບຄົວທັງໝົດ, ບ້ານບໍ່ພົ້ນທຸກຍາກມີ 43 ບ້ານ ເທົ່າກັບ 10% ຂອງບ້ານທົ່ວແຂວງ, ເມືອງບໍ່ພົ້ນທຸກມີ 4 ເມືອງ, ບ້ານພັດທະນາມີ 115 ບ້ານ, ຄອບຄົວພັດທະນາ 71.887 ຄອບຄົວ.

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນທ້າຍປີ 2022**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການ ໄລຍະ 6 ເດືອນທ້າຍປີ 2022 ແລະ 9 ແຜນວຽກຈຸດສຸມ ຕາມການສະເໜີຂອງອົງການປົກຄອງແຂວງ; ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ບັນລຸຕາມແຜນການໃນທ້າຍປີ 2022, ກອງປະຊຸມສະເໜີໃຫ້ ເອົາໃຈໃສ່ເພີ່ມເຕີມດັ່ງນີ້:

1. **ດ້ານເສດຖະກິດມະຫາພາກ**:

1) ສູ້ຊົນໃຫ້ເສດຖະກິດຈະຂະຫຍາຍຕົວຢູ່ໃນລະດັບ 4,8% ແລະ ລວມຍອດຜະລິດຕະພັນພາຍໃນປີໃຫ້ໄດ້ປະມານ 11.593 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 3.095 ໂດລາສະຫະລັດ, ໃນນັ້ນ:
- ກະສິກຳໃຫ້ຂະຫຍາຍຕົວ 3,0% ກວມ 26%;
- ອຸດສາຫະກຳໃຫ້ຂະຫຍາຍຕົວ 7,4% ກວມ 39%;
- ການບໍລິການໃຫ້ຂະຫຍາຍຕົວ 3,7% ກວມ 36% ຂອງລວມຍອດຜະລິດຕະພັນພາຍໃນ.

2) ສູ້ຊົນເກັບລາຍຮັບໃຫ້ບັນລຸ 593,88 ຕື້ກີບ ເທົ່າກັບ 53% ຂອງແຜນການປີ, ຄາດຄະເນໝົດປີ ໃຫ້ໄດ້ 1.125,37 ຕື້ກີບ, ໃນນັ້ນ:
- ລາຍຮັບພູດສູນກາງ: ປະຕິບັດໃຫ້ໄດ້ 453,62 ຕື້ກີບ, ເທົ່າກັບ 51% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 890,86 ຕື້ກີບ;
- ລາຍຮັບພາຍໃນແຂວງ: ປະຕິບັດໃຫ້ໄດ້ 140,26 ຕື້ກີບ, ເທົ່າກັບ 59% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 234,51 ຕື້ກີບ.

3) ຄຸ້ມຄອງດ້ານລາຍຈ່າຍໃຫ້ຢູ່ໃນລະດັບ 227,43 ຕື້ກີບ, ກວມເອົາ 48% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 472,90 ຕື້ກີບ;

4) ສູ້ຊົນຮັບເອົາການຊ່ວຍເຫຼືອຈາກສູນກາງ ຈຳນວນ 47,96 ຕື້ກີບ, ກວມເອົາ 21% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 238,39 ຕື້ກີບ.

**2. ດ້ານເສດຖະກິດຂອງບັນດາຂະແໜງການ:**

1) ກະສິກຳ ແລະ ປ່າໄມ້:

- ສູ້ຊົນປູກເຂົ້າ ໃຫ້ໄດ້ 44.437 ເຮັກຕາ ຄາດຄະເນຜົນຜະລິດ ໃຫ້ໄດ້ 177.231 ໂຕນ;
- ສູ້ຊົນປູກສະບຽງອາຫານ ແລະ ເປັນສິນຄ້າ ໃຫ້ໄດ້ 111.772 ເຮັກຕາ, ຄາດຄະເນຜົນຜະລິດ 1.782.421 ໂຕນ;
- ສູ້ຊົນຜະລິດ ຊີ້ນ, ໄຂ່, ປາ ໃຫ້ໄດ້ 23.187 ໂຕນ;
- ສູ້ຊົນຜະລິດສັດໃຫຍ່ສົ່ງອອກເປັນສິນຄ້າ ໃຫ້ໄດ້ 32.000 ໂຕ (ງົວ 16.000 ໂຕ, ຄວາຍ 6.000 ໂຕ ແລະ ໝູ 10.000 ໂຕ);
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

2) ອຸດສາຫະກຳ ແລະ ການຄ້າ:

- ມູນຄ່າສົ່ງອອກສິນຄ້າໄປຕ່າງປະເທດ ໃຫ້ບັນລຸ 12 ລ້ານໂດລາສະຫະລັດ;
- ມູນຄ່າການນຳເຂົ້າສິນຄ້າຈາກຕ່າງປະເທດ ໃຫ້ຢູ່ໃນລະດັບ 21 ລ້ານໂດລາສະຫະລັດ;
- ສ້າງມູນຄ່າການຜະລິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ບັນລຸ 120 ຕື້ກີບ;
- ສ້າງມູນຄ່າການຈຳໜ່າຍຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 139,89 ຕື້ກີບ;
- ສ້າງມູນຄ່າການຈໍລະຈອນສິນຄ້າພາຍໃນແຂວງ ໃຫ້ຂະຫຍາຍຕົວເພີ່ມຂຶ້ນອີກ 2% ຂຶ້ນໄປ;
- ຕິດຕາມ, ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫລາດ ບໍ່ໃຫ້ເໜັງຕີງເກີນ 12% ຂອງລາຄາສິນຄ້າ;
- ສືບຕໍ່ສ້າງຄວາມເຂັ້ມໃຫ້ຫົວໜ່ວຍ SMEs ໂດຍເນັ້ນໃສ່ການຊຸກຍູ້ສົ່ງເສີມ ເຄື່ອງຫັດຖະກຳແຜ່ນແພ ຢູ່ເມືອງຄອບ, ປຸງແຕ່ງຊາ ແລະ ເຫຼົ້າໝາກເດືອຍ ຢູ່ເມືອງຊຽງຮ່ອນ ແລະ ເຂົ້າຮາງເມືອງພຽງ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

3) ພະລັງງານ ແລະ ບໍ່ແຮ່:

- ສູ້ຊົນຈັດຕັ້ງປະຕິບັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຮຸ່ງ 1 ໃຫ້ສຳເລັດ ແລະ ໃຫ້ໄດ້ດຳເນີນການຂາຍໄຟຟ້າໃນທ້າຍປີ 2022;
- ສືບຕໍ່ ກວດກາ ແລະ ປະເມີນຄືນບັນດາໂຄງການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນ ສຳລັບໂຄງການເຂື່ອນໄຟຟ້າຂະໜາດນ້ອຍ 10 ໂຄງການ, ເພື່ອຄັດເລືອກເອົາໂຄງການທີ່ມີຄວາມຄືບໜ້າ ແລະ ມີເງື່ອນໄຂກ້າວເຂົ້າສູ່ຂັ້ນຕອນການພັດທະນາ 2 ໂຄງການ;
- ສືບຕໍ່ ຊຸກຍູ້ ໃຫ້ບ້ານມີໄຟຟ້າໃນລະບົບຊົມໃຊ້ເພີ່ມຂຶ້ນ 1 ບ້ານ ແລະ ຄອບຄົວຊົມໃຊ້ເພີ່ມຂຶ້ນ 800 ຄອບຄົວ;
- ສືບຕໍ່ຜະລິດ-ຊື້ກະແສໄຟຟ້າພາຍໃນ ໃຫ້ໄດ້ 87,34 ລ້ານກິໂລວັດໂມງ ແລະ ຈຳໜ່າຍພະລັງງານໄຟຟ້າໃຫ້ໄດ້ 74,73 ລ້ານກິໂລວັດໂມງ;
- ສືບຕໍ່ຊຸກຍູ້ ສົ່ງເສີມການຜະລິດ ແລະ ຈຳໜ່າຍຫີນປູນ ໃຫ້ໄດ້ 280.191 ແມັດກ້ອນ;

- ສືບຕໍ່ ຕິດຕາມ ກວດກາ ແລະ ຊຸກຍູ້ ໂຄງການຂຸດຄົ້ນແຮ່ທົດລອງ ທີ່ໄດ້ເຊັນສັນຍາສຳປະທານ 4 ບໍລິສັດ ໃຫ້ໄດ້ຈັດຕັ້ງປະຕິບັດໃນການຂຸດຄົ້ນ;
- ສຸມໃສ່ຈັດຕັ້ງປະຕິບັດ 8 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

4) ໂຍທາທິການ ແລະ ຂົນສົ່ງ:

- ສືບຕໍ່ປູຢາງອັດສະຟານ ເສັ້ນທາງພາຍໃນເທດສະບານແຂວງ ຈຳນວນ 10 ສັນຍາ;
- ສືບຕໍ່ລົງມືກໍ່ສ້າງຕາຝັ່ງເຈື່ອນ ຈຸດນາຂ່າ (ໜອງຄອບ ເມືອງບໍ່ແຕນ);
- ສືບຕໍ່ການຟື້ນຟູ-ສ້ອມແປງປ້ອງກັນຕາຝັ່ງເຈື່ອນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊຍະບູລີ;
- ສືບຕໍ່ກໍ່ສ້າງໂຄງການຂະຫຍາຍນ້ຳປະປາ ແລະ ສຸຂາພິບານເມືອງໄຊຍະບູລີ ໃຫ້ໄດ້ນຳໃຊ້, ພ້ອມທັງ ຮ່າງແຜນຍຸດທະສາດ ແລະ ວິໄສທັດ ວຽກນ້ຳປະປາຂອງແຂວງ ປີ 2021-2030;
- ສືບຕໍ່ຊຸກຍູ້ ການບູລະນະສ້ອມແປງທາງຫຼວງແຫ່ງຊາດແບບມອບເໝົາ 3 ປີ (2022-2024) ແລະ ບັນດາໂຄງການກໍ່ສ້າງເສັ້ນທາງຕ່າງໆ ທີ່ໄດ້ຮັບການອານຸມັດແລ້ວໃຫ້ໄດ້ຈັດຕັ້ງປະຕິບັດຕາມ ແຜນການ;
- ສືບຕໍ່ຕິດຕາມ ເຝົ້າລະວັງ ເສັ້ນທາງສຸກເສີນທີ່ອາດເກີດຂຶ້ນໃນລະດູຝົນປີ 2022 ເພື່ອແກ້ໄຂ ສ້ອມແປງເສັ້ນທາງທີ່ຖືກຕັດຂາດໃຫ້ທັນການ;
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

5) ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

- ສືບຕໍ່ເຜີຍແຜ່ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບ ຮອບດ້ານຂັ້ນແຂວງ ໃຫ້ໄດ້ 11 ເມືອງ;
- ສືບຕໍ່ຈັດສັນທີ່ດິນຂັ້ນເມືອງ 1 ເມືອງ ທີ່ໄດ້ຈັດຕັ້ງປະຕິບັດແລ້ວໃຫ້ສຳເລັດ ແລະ ສືບຕໍ່ກຳນົດອີກ 1 ເມືອງ, ຈັດສັນທີ່ດິນຂັ້ນບ້ານ 22 ບ້ານ;
- ຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດ 2.980 ຕອນ, ເກັບກຳຂໍ້ມູນໂຕເລກສຳມະໂນພາສີທີ່ດິນ ໃຫ້ໄດ້ 500 ຕອນ ແລະ ປະເມີນຄືນການຈັດສັນທີ່ດິນ 8 ປະເພດ ຂັ້ນບ້ານໃຫ້ສຳເລັດ 64 ບ້ານ;
- ສືບຕໍ່ສ້າງລະບົບກົນໄກຄຸ້ມຄອງຕົວເມືອງສີຂຽວ, ສະອາດ, ງາມຕາ ທົ່ວແຂວງ ໃຫ້ໄດ້ 28 ບ້ານ, ອອກໃບຢັ້ງຢືນສິ່ງແວດລ້ອມໃຫ້ໄດ້ 175 ຫົວໜ່ວຍ;
- ສູ້ຊົນສ້າງແຜນຄຸ້ມຄອງອ່າງຮັບນ້ຳທີ່ເປັນບູລິມະສິດໃຫ້ໄດ້ 1 ອ່າງ, ຕິດຕາມກວດກາຄຸນນະພາບນ້ຳ ໃນ 28 ຈຸດ, ອອກໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ 27 ຫົວໜ່ວຍ ແລະ ເກັບກຳຂໍ້ມູນການນຳໃຊ້ນ້ຳໃຕ້ດິນ ແລະ ນ້ຳໜ້າດິນ ໃຫ້ສຳເລັດໃນທົ່ວແຂວງ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

6) ເຕັກໂນໂລຊີ ແລະ ການສື່ສານ:

- ສືບຕໍ່ ຊຸກຍູ້ສົ່ງເສີມ, ໂຄສະນາເຜີຍແຜ່ ແລະ ນຳພາບັນດາຫ້ອງການລັດ ແລະ ຂະແໜງການຕ່າງໆ ໃຫ້ຫັນມານຳໃຊ້ບໍລິການລະບົບບໍລິຫານລັດດີຈີຕ້ອນຢ່າງກ້ວາງຂວາງ ເພື່ອຫັນເປັນທັນສະໄໝ

ເປັນຕົ້ນລະບົບເຄືອຂ່າຍຂອງພາກລັດ, ກອງປະຊຸມທາງໄກ (Video Conference), E-Office, Email, G-chat ແລະ ອື່ນໆ;

- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

## 3. ດ້ານວັດທະນະທຳ-ສັງຄົມ

1) ສຶກສາທິການ ແລະ ກິລາ:

- ສືບຕໍ່ຮັກສາ 10 ຕົວຊີ້ບອກ ທີ່ບັນລຸແລ້ວ ແລະ ສູ້ຊົນຈັດຕັ້ງປະຕິບັດ ໃນ 9 ຕົວຊີ້ບອກ ທີ່ບໍ່ທັນບັນລຸຄື:
  + ອັດຕາການເຂົ້າຮຽນຂອງເດັກ 5 ປີ
  + ອັດຕາເຂົ້າຮຽນລວມປ1
  + ອັດຕາປະລະຊັ້ນປ1
  + ອັດຕາເຂົ້າຮຽນລວມປ5
  + ອັດຕາເລື່ອນຊັ້ນປ5ຂຶ້ນມ1
  + ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ
  + ອັດຕາເຂົ້າຮຽນໃໝ່ລວມ
  + ອັດຕາປະລະຊັ້ນມັນທະຍົມຕອນຕົ້ນ
  + ນັກຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

2) ສາທາລະນະສຸກ:

- ສືບຕໍ່ຮັກສາ 9 ຕົວຊີ້ວັດທີ່ບັນລຸແລ້ວ ແລະ ສູ້ຊົນຈັດຕັ້ງປະຕິບັດ 2 ຕົວຊີ້ວັດ ທີ່ບໍ່ທັນບັນລຸຄື:
  + ອັດຕາການເກີດລູກມີແພດຊ່ວຍ;
  + ອັດຕາການສັກຢາກັນພະຍາດໃນເດັກນ້ອຍລຸ່ມ 1 ປີ;

3) ແຮງງານ ແລະ ສະຫວັດດີການ-ສັງຄົມ:

- ສືບຕໍ່ຈັດຫາວຽກເຮັດງານທຳ;
- ສືບຕໍ່ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ;
- ສືບຕໍ່ຂະຫຍາຍອັດຕາການປົກຄຸມຂອງລະບົບປະກັນສັງຄົມ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ;
- ສືບຕໍ່ລະດົມທຶນເຂົ້າໃນກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ;
- ສືບຕໍ່ຮັບບໍລິຈາກເລືອດ ໃຫ້ບັນລຸຕາມແຜນການ;
- ສຸມໃສ່ຈັດຕັ້ງປະຕິບັດ 4 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

4) ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ສືບຕໍ່ສ້າງຄອບຄົວວັດທະນະທຳ;
- ສືບຕໍ່ສ້າງບ້ານວັດທະນະທຳໃໝ່;
- ສືບຕໍ່ສ້າງບ້ານວັດທະນະທຳແບບຢ່າງຍືນຍົງຕິດພັນກັບການທ່ອງທ່ຽວ;

- ສືບຕໍ່ພັດທະນາແຫຼ່ງທ່ອງທ່ຽວທີ່ເປັນບຸລິມະສິດ;
- ສືບຕໍ່ດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໃຫ້ບັນລຸຕາມແຜນການ;
- ສຸມໃສ່ຈັດຕັ້ງປະຕິບັດ 3 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

5) ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:

- ສືບຕໍ່ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ;
- ສືບຕໍ່ສ້າງບ້ານພັດທະນາ ແລະ ຄອບຄົວພັດທະນາ;
- ສືບຕໍ່ສ້າງຄອບຄົວພົ້ນທຸກ, ບ້ານພົ້ນທຸກ ແລະ ເມືອງພົ້ນທຸກ;
- ສືບຕໍ່ຂະຫຍາຍກຸ່ມຜະລິດກະສິກຳ ແລະ ສ້າງບ້ານແບບຢ່າງທາງດ້ານກະສິກຳ ແລະ ປ່າໄມ້.

**ມາດຕາ 3 ມາດຕະການຈັດຕັ້ງປະຕິບັດ**

ກອງປະຊຸມເຫັນດີຮັບຮອງເອົາ 3 ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະ 6 ເດືອນທ້າຍປີ 2022 ຕາມການສະເໜີຂອງອົງການປົກຄອງແຂວງ; ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃຫ້ບັນລຸຕາມຄາດໝາຍ, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ບາງມາດຕະການ ເພີ່ມເຕີມດັ່ງນີ້:

1. ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ສືບຕໍ່ສູ້ຊົນ ປະຕິບັດຄາດໝາຍອັດຕາການເຕີບໂຕ ຂອງເສດຖະກິດໃຫ້ບັນລຸ 4,8% ຂຶ້ນໄປໃນທ້າຍປີ ໂດຍສຸມໃສ່ຈັດຕັ້ງປະຕິບັດ 8 ມາດຕະການ ທີ່ກຳນົດໄວ້ໃນມະຕິສະບັບເລກທີ 71/ສພຂ.ຊຍ ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ ຂອງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ພ້ອມທັງຊຸກຍູ້ໃຫ້ທຸກຂະແໜງການຂອງແຂວງ, ເມືອງ ຜັນຂະຫຍາຍເປັນແຜນງານວຽກງານ ໃຫ້ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;
2. ເພີ່ມທະວີຊຸກຍູ້ສົ່ງເສີມການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິຜົນ, ເອົາໃຈໃສ່ປັບປຸງສິ່ງອຳນວຍຄວາມສະດວກ ຜ່ານກົນໄກການຄຸ້ມຄອງລະບົບປະຕູດຽວ ແລະ ການແກ້ໄຂຂອດອຸດຕັນຕ່າງໆ;
3. ຮີບຮ້ອນສະໜອງປັດໃຈການຜະລິດກະສິກຳໃຫ້ຊາວກະສິກອນ ຮັບໃຊ້ການຜະລິດລະດູຝົນໃຫ້ພຽງພໍເປັນຕົ້ນ ແນວພັນພືດ, ແນວພັນສັດ, ຝຸ່ນ-ປຸ໋ຍ ພ້ອມທັງຕິດຕາມກວດກາ ແລະ ຄຸ້ມຄອງການເພີ່ມຂຶ້ນຂອງລາຄາສິນຄ້າ ໂດຍສະເພາະສິນຄ້າທີ່ມີຄວາມຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນ;
4. ສືບຕໍ່ກຳນົດການຜະລິດ ແລະ ສິນຄ້າປາຍແຫຼມ ທີ່ເປັນທ່າແຮງ ແລະ ປົ່ມອ້ອມ ຂອງທ້ອງຖິ່ນ;
5. ສືບຕໍ່ຊຸກຍູ້ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ເຂັ້ມແຂງ ແລະສາມາດເຂົ້າເຖິງແຫຼ່ງທຶນ MSME;
6. ສືບຕໍ່ຈັດສັນທີ່ດິນ ແລະ ອອກໃບຕາດິນ, ປະເມີນຄືນການຈັດຕັ້ງປະຕິບັດ ການຈັດສັນທີ່ດິນ, ທີ່ດິນປ່າໄມ້, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຮອບດ້ານ ໃຫ້ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ ແລະ ທ່າແຮງພາຍໃນແຂວງ ໂດຍສະເພາະການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ 3 ປະເພດປ່າ ທີ່ສົ່ງຜົນກະທົບຕໍ່ ທີ່ດິນທຳການຜະລິດຂອງປະຊາຊົນ;

7. ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງ ລາຍຮັບງົບປະມານ, ດຳລັດວ່າດ້ວຍປະຢັດ ແລະ ຕ້ານການຟຸມເຟືອຍ, ດຳລັດວ່າດ້ວຍລົດຂອງລັດ ແລະ ນິຕິກຳ ໃຕ້ກົດໝາຍທີ່ກ່ຽວຂ້ອງຕ່າງໆ ໃຫ້ເຂັ້ມງວດ;
8. ເອົາໃຈໃສ່ ຄຸ້ມຄອງ, ຕິດຕາມກວດກາ ການສຳຫຼວດ, ການອະນຸຍາດ ແລະ ການປະຕິບັດການຂຸດຄົ້ນ ທິດລອງແຮ່ທາດ ແລະ ການຜະລິດໄຟຟ້າ ໃຫ້ເຂົ້າສູ່ລະບຽບກົດໝາຍ;
9. ເອົາໃຈໃສ່ຄົ້ນຄວ້າ, ປັບປຸງ ແລະ ປະເມີນຄືນການຈັດຕັ້ງປະຕິບັດບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດເສດຖະກິດ-ການເງິນ, ພ້ອມທັງພິຈາລະນາສ້າງໃຫມ່ ເພື່ອເປັນເຄື່ອງມືໃຫ້ການຈັດຕັ້ງປະຕິບັດ ຄາດໝາຍຕ່າງໆຂອງແຜນການໃຫ້ມີຜົນສຳເລັດ;
10. ສືບຕໍ່ເອົາໃຈໃສ່ເຝົ້າລະວັງການແຜ່ລະບາດຂອງພະຍາດໂຄວິດ-19 ສາຍພັນໃໝ່, ການລະບາດຂອງ ພະຍາດລະດູການ, ພະຍາດໄຂ້ຍຸງລາຍ ແລະ ການລະບາດຂອງພະຍາດສັດທຸກປະເພດຢ່າງເຂັ້ມງວດ;

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການຂອງແຂວງ ແລະ ອົງການປົກຄອງເມືອງຈັດຕັ້ງ ປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນ ແຂວງ ປະຈຳເຂດເລືອກຕັ້ງເມືອງ ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງມີລັບ ຄຳພັນເພັງ